ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມຄະນະກໍາມະການຄຸ້ມຄອງຫຼັກຊັບ ຄັ້ງທີ II ປະຈໍາປີ 2023




ໃນຕອນບ່າຍຂອງວັນທີ 2 ພະຈິກ 2023 ທີ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ໄດ້ເປີດກອງປະຊຸມຄະນະກໍາມະການຄຸ້ມຄອງຫຼັກຊັບ (ຄຄຊ) ຄັ້ງທີ II ປະຈໍາປີ 2023 ຂຶ້ນຢ່າງເປັນທາງການ ໂດຍການເປັນປະທານຂອງທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ (ທຫລ), ຮອງປະທານຄະນະກໍາມະການຄຸ້ມຄອງຫຼັກຊັບ ພ້ອມດ້ວຍການເຂົ້າຮ່ວມຂອງບັນດາຮອງລັດຖະມົນຕີ ທີ່ເປັນຄະນະກໍາມະການຂອງ ຄຄຊ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ. ກອງປະຊຸມໃນຄັ້ງນີ້ ໄດ້ເປີດຂຶ້ນເພື່ອເປັນການຮັບຟັງລາຍງານຄວາມຄືບໜ້າກ່ຽວກັບການພັດທະນາຕະຫຼາດທຶນ ກໍ່ຄືການຜັນຂະຫຍາຍຈັດຕັ້ງປະຕິບັດ ບັນດາແຜນງານ-ໂຄງການພັດທະນາຕະຫຼາດທຶນ 05 ປີ (2021-2025).

ພາຍໃນກອງປະຊຸມ ທ່ານ ນາງ ຟອງຈິນດາ ແສງສຸລິວົງ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ (ສຄຄຊ), ເລຂາຄະນະກໍາມະການຄຸ້ມຄອງຫຼັກຊັບ ໄດ້ລາຍງານໃຫ້ຜູ້ເຂົ້າຮ່ວມປະຊຸມໄດ້ຮັບຊາບກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຄຸ້ມຄອງຫຼັກຊັບຢ່າງຕັ້ງໜ້າ. ໃນນັ້ນ, ຜົນສໍາເລັດອັນພົ້ນເດັ່ນແມ່ນ ສໍາເລັດການສ້າງ ແລະ ປັບປຸງນິຕິກໍາໃຕ້ກົດໝາຍວ່າດ້ວຍຫຼັກຊັບ ຈໍານວນໜຶ່ງ; ສໍາເລັດການຈັດກອງປະຊຸມຜູ້ຖືຮຸ້ນຂອງຕະຫຼາດຫຼັກຊັບ

ລາວ; ສຳເລັດການອະນຸຍາດບໍລິສັດຈົດທະບຽນອອກຈຳໜ່າຍຮຸ້ນກູ້ ຈຳນວນ 04 ຄັ້ງ; ສຳເລັດການຄົ້ນຄວ້າສະເໜີຊື່ກະດານຮອງ; ພ້ອມທັງ ສຳເລັດການຄັດເລືອກບໍລິສັດເປົ້າໝາຍທີ່ມີເງື່ອນໄຂ ແລະ ສົນໃຈເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວຈຳນວນໜຶ່ງ; ໄດ້ຮັບທິດຊີ້ນຳຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການກຳນົດກະຊວງການເງິນ ເປັນຜູ້ຄຸ້ມຄອງຫຼັກບໍລິສັດປະເມີນມູນຄ່າຊັບສິນ ຢູ່ ສປປ ລາວ; ສຳເລັດການແຕ່ງຕັ້ງກົມກ່ຽວຂ້ອງເພື່ອເປັນຈຸດໃຈກາງປະສານງານວຽກງານຕະຫຼາດທຶນຈາກ 07 ພາກສ່ວນ. ພ້ອມນີ້, ໄດ້ສຳເລັດເຊັນບົດບັນທຶກຄວາມເຂົ້າໃຈຮ່ວມມືສອງຝ່າຍ (MOU) ລະຫວ່າງ ສຄຄຊ ແລະ ຄຄຊ ກຳປູເຈຍ ກ່ຽວກັບການແລກປ່ຽນຂໍ້ມູນຂ່າວສານ ແລະ ການຊ່ວຍເຫຼືອຊຶ່ງກັນ ແລະ ກັນ. ນອກຈາກນີ້, ພາຍໃນກອງປະຊຸມຍັງໄດ້ຮັບຟັງການລາຍການ ແລະ ປຶກສາຫາລືກ່ຽວກັບບາງໜ້າວຽກທີ່ສຳຄັນດັ່ງນີ້:

1. ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຄົບຄະນະຂອງ ຄຄຊ ຄັ້ງທີ I ປີ 2023 ແລະ ປຶກສາຫາລືໃນການຫັນ ຫຼື ປະຕິຮູບລັດວິສາຫະກິດຜ່ານກົນໄກຕະຫຼາດທຶນ ໃນ ສປປ ລາວ;
2. ລາຍງານການເຄື່ອນໄຫວວຽກງານຂອງ ສຄຄຊ ປະຈຳ 9 ເດືອນ ແລະ ທິດທາງແຜນການ 3 ເດືອນທ້າຍປີ 2023;
3. ລາຍງານສະພາບການເຄື່ອນໄຫວພົ້ນເດັ່ນຂອງ ຕລຊລ ປະຈຳ 9 ເດືອນ ແລະ ແຜນການ 3 ເດືອນທ້າຍປີ 2023.




ກອງປະຊຸມດັ່ງກ່າວໄດ້ດຳເນີນໄປເປັນເວລາເຄິ່ງວັນ ຜູ້ເຂົ້າຮ່ວມກອງປະຊຸມໄດ້ເຊີດຊູຄວາມຮັບຜິດຊອບສູງ ແລະ ສຸມທຸກສະຕິປັນຍາຂອງຕົນເຂົ້າໃນການຄົ້ນຄວ້າ, ປະກອບຄຳເຫັນຕໍ່ແຕ່ລະເນື້ອໃນຕາມວາລະກອງປະຊຸມຢ່າງເປັນພາວະວິໄສ, ກົງໄປກົງມາ ແລະ ແທດເໝາະກັບສະພາບຄວາມເປັນຈິງ ເຮັດໃຫ້ກອງປະຊຸມໃນຄັ້ງສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

**ຂ່າວ-ພາບ: ວັນປະເສີດ ສິມບູນຂັນ**

*ຢູ່ເມືອງໃຊ້ເງິນກີບລາວ*